ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ: 171 ພກພ
ນະຄອນຫຼວງວຽງຈັນ, ວັນທີ: 31 MAR 2025

ໜັງສືແຈ້ງການ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
ເລື່ອງ: ການປັບປຸງເນື້ອໃນ ວາລະ 5 ໃນໜັງສືເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນຄັ້ງທີ III ປີ 2025 ສະບັບເລກທີ 170,ລົງວັນທີ 28/03/2025.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ("ບໍລິສັດ" ຫຼື "ພກພ") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ ສະພາບໍລິຫານໄດ້ມີມະຕິໃນການປັບປຸງເນື້ອໃນ ວາລະ **5 ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025 ຄືນໃໝ່** ເຊິ່ງ ມີລາຍລະອຽດດັ່ງລຸ່ມນີ້:

❖ **ເນື້ອໃນກ່ອນປັບປຸງ:**

ວາລະທີ 05. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2025 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35.000 ໂດລາສະຫາລັດ, ບໍລິສັດ PWC ເປັນຜູ້ກວດສອບພາຍນອກທີ່ມີປະສົບການ, ຊຶ່ງມີຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2022	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000
2023	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000
2024	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35.000

❖ **ເນື້ອໃນຫຼັງປັບປຸງ:**

ວາລະທີ 05. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025

ຂໍ້ມູນປະກອບ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາ ມອບໝາຍໃຫ້ ຜູ້ອຳນວຍການໃຫຍ່ ພກພ ປຶກສາຫາລືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ຽວກັບລະບຽບການທີ່ກ່ຽວຂ້ອງ ເພື່ອຄັດເລືອກຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2025 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 30.000 ໂດລາສະຫາລັດ. ຫາກມີຄວາມຄືບໜ້າທາງ ພກພ ຈະລາຍງານໃຫ້ຮັບຊາບຢ່າງຮີບດ່ວນ. ລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ (ໂດລາສະຫາລັດ)
2022	35.000
2023	35.000
2024	35.000

ດັ່ງນັ້ນ ຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ,

ຜູ້ອຳນວຍການໃຫຍ່

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ແພງ ດວງເງິນ